# ຈົດໝາຍຂ່າວ
# ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

ສະບັບ ປະຈຳເດືອນ
ມັງກອນ – ມີນາ 2021




"

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງ ເພີ່ມທະວີການເຝົ້າລະວັງການປ່ຽນແປງດິນຟ້າອາກາດ ເພື່ອ ໃຫ້ປະຊາຊົນຮັບຮູ້ຂໍ້ມູນຂ່າວສານ ແລະ ເປັນເຈົ້າ ການກະກຽມ ຮັບມືກັບຜົນກະທົບ ຈາກໄພພິບັດຕ່າງໆຢ່າງທັນການ.

ນອກນີ້ ກໍ່ເອົາໃຈ ໃສ່ສືບຕໍ່ຜັນຂະຫຍາຍນິຕິກຳຕ່າງໆ ໃນການ ປົກປັກຮັກສາສິ່ງແວດລ້ອມຢ່າງເຄັ່ງຄັດ ແລະ ຕິດຕາມກວດ ກາ, ເອົາໃຈໃສ່ການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງເປັນລະບົບ.

"



ທ່ານ ພັນຄຳ ວິພາວັນ
ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ກ່າວໄວ້ໃນ ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງ ຊາດ ຊຸດທີ 9 ໃນວັນທີ 22 ມີນາ 2021.
ອ່ານເພີ່ມເຕີມ ທີ່ນີ້.

## ເນື້ອໃນ ໃນ ສະບັບນີ້:


### ກອງປະຊຸມ ແລະ ກິດຈະກຳໂດຍ LIWG

ກອງປະຊຸມ ແລະ ກິດຈະກຳໂດຍກອງເລຂາໃນໄຕມາດ ໂດຍສະເພາະກ່ຽວກັບການລາຍງານຜົນການສຶກສາ

### ວຽກງານຂອງໂຄງການໄລຟ໌

ການຝຶກອົບຮົມຂອງໂຄງການໄລຟ໌ ແລະ ກິດຈະກຳເດັ່ນຂອງໂຄງການ

### ບົດຄວາມ ແລະ ວິດີໂອແນະນຳເບິ່ງ

ບົດຄວາມແນະນຳອ່ານ ແລະ ວິດີໂອ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ

### ຂ່າວເດັ່ນປະຈຳໄຕມາດ

ຂ່າວເດັ່ນກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ປະຈຳໄຕມາດ

### ກິດຈະກຳໃນສະບັບຖັດໄປ

ແນະນຳຫົວຂໍ້ກິດຈະກຳ ຂອງສະບັບຖັດໄປ

# ກອງປະຊຸມ ແລະ ກິດຈະກຳຕ່າງໆໂດຍ ກອງເລຂາ LIWG



## ກອງປະຊຸມປະຈຳປີ (AGM) 2020 ຂອງ LIWG

ໃນວັນທີ 26 ກຸມພາ 2021 ກອງເລຂາ LIWG ໄດ້ຈັດກອງປະຊຸມປະຈຳປີ 2020 ເພື່ອລາຍງານຄວາມຄືບໜ້າ ແລະ ຜົນຂອງການການປະຕິບັດກິດຈະກຳຂອງເຄືອຂ່າຍໃນຕະຫຼອດປີ 2020 ພ້ອມທັງອັບເດດແຜນກິດຈະກຳຂອງເຄືອຂ່າຍປະຈຳປີ 2021 ດ້ວຍ. ໃນກອງປະຊຸມກອງເລຂາໄດ້ລາຍງານກ່ຽວກັບຜົນຂອງການປະຕິບັດກິດຈະກຳເດັ່ນຄື:

- ຜົນຂອງແບບສອບຖາມປະເມີນການເຮັດວຽກຂອງເຄືອຂ່າຍ ປະຈຳປີ ເຊິ່ງໄດ້ສະແດງໃຫ້ເຫັນວ່າ ໃນຕະຫຼອດປີ 2020 ວຽກງານການເຊື່ອມຕໍ່ ແລະ ພົວພັນເຊິ່ງກັນ ແລະ ກັນຂອງບັນດາສະມາຊິກ ແລະ ລະຫວ່າງກອງເລຂາ ແມ່ນເພີ່ມຂຶ້ນ. ນອກນັ້ນ ການເຮັດວຽກຮ່ວມກັນລະຫວ່າງບັນດາສະມາຊິກໃນ LIWG ກໍ່ມີທິດທາງທີ່ດີຂຶ້ນເຊັ່ນດຽວກັນໃນໄລຍະປີທີ່ຜ່ານມາ
- ບົດວິເຄາະ ການສົມທຽບ ກົດໝາຍ ລະຫວ່າງ ກົດໝາຍວ່າດ້ວຍ ປ່າໄມ້ ແລະ ກົດໝາຍວ່າດ້ວຍ ທີ່ດິນ (ເຊິ່ງຈະມີການເຜີຍແຜ່ໃນ ເວັບໄຊ້ ພວກເຮົາໃນໄວໆນີ້)
- ກອງປະຊຸມຕ່າງໆ ທີ່ກອງເລຂາຈັດ ແລະ ມີສ່ວນຮ່ວມຄື: ກອງປະຊຸມເຜີຍແຜ່ ບົດສຶກສາສິດທິແມ່ຍິງຕໍ່ກັບທີ່ດິນໃນລາວ, ງານແລກປ່ຽນບົດຮຽນຂອງໄວໜຸ່ມ ພາຍໃຕ້ໂຄງການ Voice, ງານແລກປ່ຽນບົດຮຽນ ລະ ຫວ່າງອົງການຈັດຕັ້ງທາງສັງຄົມ ແລະ ພາກລັດກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ
- ເປັນປະທານຮ່ວມ ກັບ ກົມທີ່ດິນ ໃນການຈັດກອງປະຊຸມ ຂະແໜງການຍ່ອຍທີ່ດິນ (LSSWG)
- ການຈັດທຳ ບົດສະຫຼຸບຫຍໍ້ກ່ຽວກັບ ບົດສຶກສາແມ່ຍິງ ແລະ ສິດນຳໃຊ້ທີ່ດິນ ຢູ່ລາວ
- ພັດທະນາປະຕິທິນກົດໝາຍປະຈຳປີ 2021 ແລະ ການຈັດການຝຶກອົບຮົມ ການນຳໃຊ້ປະຕິທິນກົດໝາຍໃນການເຜີຍແຜ່ຂໍ້ມູນກ່ຽວກັບກົດໝາຍທີ່ດິນ ແລະ ທີ່ກ່ຽວຂ້ອງ ແກ່ບັນດາສະມາຊິກ
- ການປະເມີນຜົນຂອງປະທິນກົດໝາຍ ແລະ ວິດີໂອບົດຮຽນທີ່ດີ ຂອງການນຳໃຊ້ປະຕິທິນກົດໝາຍໃນຊຸມຊົນ

ໃນກອງປະຊຸມ ທີມງານໄລຟ໌ (LIFE) ກໍ່ໄດ້ນຳສະເໜີກິດຈະກຳຂອງທີມ ໂດຍສະເພາະ ການພັດທະນາຄູ່ມືການຝຶກອົບຮົມຫົວຂໍ້ໃໝ່ ແລະ ການປັບປຸງຫຼັກສູດ ໂດຍສະເພາະຫົວຂໍ້ກ່ຽວກັບ ການຂຶ້ນທະບຽນທີ່ດິນ ແລະ ການອອກໃບຕາດິນລວມໝູ່, ການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບ, ປັບປຸງຄູ່ມືກ່ຽວກັບ ສິດທິທີ່ດິນຕາມປະເພນີ ແລະ ຄູ່ມື ການປົກປັກຮັກສາສິ່ງແວດລ້ອມ (ພາຍໃຕ້ໂຄງການ VOICE). ບັນດາຄູ່ມືຕ່າງໆດັ່ງກ່າວ ແມ່ນຈະມີການນຳໃຊ້ເຂົ້າໃນການຈັດຝຶກອົບຮົມຂອງທີມງານໄລຟ໌ ແກ່ບັນດາຄູ່ຮ່ວມງານ ເຊິ່ງບັນດາສະມາຊິກຂອງ LIWG ແມ່ນສາມາດສະເໜີ ເພື່ອຂໍໃຫ້ທີມງານໄລຟ໌ຝຶກອົບຮົມໃຫ້ໄດ້.

ນອກຈາກການນຳສະເໜີກ່ຽວກັບຄູ່ມືແລ້ວ ທີມໄລຟ໌ ກໍ່ໄດ້ມີການນຳສະເໜີກ່ຽວກັບບົດຮຽນທີ່ດີຈາກຜົນຈາກການຝຶກອົບຮົມ ໂດຍສະເພາະກ່ຽວກັບສັນຍາກະສິກຳ ເຊິ່ງໄດ້ຊ່ວຍໃຫ້ປະຊາຊົນເຂົ້າໃຈຫຼາຍຂຶ້ນກ່ຽວກັບເງື່ອນໄຂຂອງການເຮັດສັນຍາ ເພື່ອເປັນການປ້ອງກັນການຖືກເອົາທຽບຈາກນັກລົງທຶນ.

ພ້ອມນີ້ ໃນກອງປະຊຸມ ກໍ່ຍັງໄດ້ມີການນຳສະເໜີ ຜົນໄດ້ຮັບເບື້ອງຕົ້ນຈາກ ບົດສຶກສາ ການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມປະເພນີຂອງແມ່ຍິງ ໃນແຂວງຜົ້ງສາລີ ໂດຍ ນັກວິໄຈອິດສະຫຼະ (ບົດສຶກສານີ້ ແມ່ນກຳລັງຢູ່ໃນຂັ້ນຕອນການສະຫຼຸບ) ແລະ ການນຳສະເໜີຈາກ ໂຄງການ MRLG ເພື່ອແລກປ່ຽນບົດຮຽນ ໃນການຈັດຕັ້ງປະຕິບັນດາກິດຈະກຳທີ່ສະໜັບສະໜູນການຮັບຮູ້ສິດຕາມປະເພນີໃນເຂດປ່າໄມ້ໃນແຂວງຄຳມ່ວນ ເຊິ່ງສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບ ວຽກຂອງ MRLG ໃນປະເທດລາວໄດ້ທີ່: https://www.mrlg.org/laos/

## ການແຈກຢາຍ ແລະ ການພັດທະນາປຶ້ມຄູ່ມືແນະນຳການນຳໃຊ້ ປະຕິທິນກົດໝາຍປະຈຳປີ 2021

ຫຼັງຈາກ ງານເປີດໂຕປະຕິທິນກົດໝາຍປີ 2021 ກອງເລຂາ ແລະ ບັນດາສະມາຊິກຂອງ LIWG ກໍ່ໄດ້ມີການແຈກ ຢາຍປະຕິທິນກົດໝາຍ ແກ່ບັນດາຄູ່ຮ່ວມງານ ແລະ ແກ່ຊຸມຊົນໃນພື້ນທີ່ຕ່າງໆ ບ່ອນທີ່ອົງການສະມາຊິກເຮັດວຽກ



**ໃນປີນີ້ ປະຕິທິນເກືອບ 13,000 ສະບັບ ໄດ້ຖືກແຈກຢາຍໃຫ້ບັນດາຊຸມຊົນ ແລະ ຄູ່ຮ່ວມງານຕ່າງໆ ໃນເກືອບທົ່ວປະເທດລາວ.**




ນອກຈາກນັ້ນ ໃນປີນີ້ ກໍ່ຍັງໄດ້ມີການພັດທະນາປຶ້ມຄູ່ມືແນະນຳການນຳໃຊ້ ປະຕິທິນກົດໝາຍປະຈຳປີ 2021 ເພື່ອນຳໃຊ້ເຂົ້າໃນການຈັດຝຶກອົບຮົມ, ກິດຈະກຳການແຈກຢາຍ ແລະ ເຜີຍແຜ່ປະຕິທິນກົດໝາຍໃນຂັ້ນຊຸມຊົນ ໂດຍບັນດາສະມາຊິກຂອງ LIWG.

ຕໍ່ກັບການຝຶກອົບຮົມ ໃນຕົ້ນເດືອນ ທັນວາ 2020 ທີມຄູຝຶກຈາກໂຄງການ ໄລຟ໌ ກໍ່ໄດ້ຈັດການຝຶກອົບຮົມໃຫ້ແກ່ບັນດາສະມາຊິກຂອງ LIWG ຢູ່ໃນນະຄອນຫຼວງວຽງຈັນ ພ້ອມນັ້ນ ກໍ່ຍັງໄດ້ຈັດຝຶກອົບຮົມໃຫ້ບາງສະມາຊິກອີກໃນແຂວງພາກເໜືອຂອງລາວໃນຕົ້ນປີ ທີ່ຜ່ານມາ ເພື່ອໃຫ້ພວກເຂົາ ເຂົ້າໃຈຫຼາຍຂື້ນກ່ຽວກັບເນື້ອໃນປະຕິທິນ ພ້ອມທັງເສີມສ້າງທັກສະໃນການເປັນຜູ້ເຜີຍແຜ່ທີ່ດີ.

ທ່ານສາມາດເຂົ້າໄປສຶກສາເບິ່ງກ່ຽວກັບ ປຶ້ມຄູ່ມືແນະນຳການນຳໃຊ້ ປະຕິທິນກົດໝາຍປະຈຳປີ 2021
ໄດ້ທີ່: https://bit.ly/2P1e3sF

## ໂຄງການ ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການປັບປຸງ ຈິດສຳນຶກ ສຳລັບຊຸມຊົນທີ່ມີຄວາມອ່ອນໄຫວ ໃນລາວ

ໃນປັດຈຸບັນ ທາງຫ້ອງການ Helvetas ປະຈຳລາວ ແລະ LIWG ກຳລັງຢູ່ໃນຂັ້ນຕອນການປຶກສາຫາລື ກັບ ທະນາຄານໂລກ ກ່ຽວກັບໂຄງການ **ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການປັບປຸງ ຈິດສຳນຶກ ສຳລັບຊຸມຊົນທີ່ມີຄວາມອ່ອນໄຫວ ໃນລາວ** ເຊິ່ງຄາດວ່າຈະມີການຈັດຕັ້ງປະຕິບັດຫຼັງຈາກທີ່ໄດ້ມີຕົກລົງຮ່ວມກັບທະນາຄານໂລກແລ້ວ. ຈຸດປະສົງຂອງໂຄງການນີ້ ແມ່ນເພື່ອແນໃສ່ການປັບປຸງການເຂົ້າເຖິງຂໍ້ມູນທາງດ້ານກົດໝາຍ ແລະ ການໃຫ້ບໍລິການການຊ່ວຍເຫຼືອທາງດ້ານກົດໝາຍ ກ່ຽວກັບສິດທິຂອງຊຸມຊົນ ແລະ ກຸ່ມຄົນທີ່ມີຄວາມອ່ອນໄຫວຕໍ່ກັບຊັບພະຍາກອນທຳມະຊາດ ແລະ ການດຳລົງຊີວິດ. ໂຄງການນີ້ແມ່ນຈະປະກອບມີ 3 ອົງປະກອບຄື:

- ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການປັບປຸງຈິດສຳນຶກ
- ການບໍລິການໃຫ້ຄຳປຶກສາ ທາງດ້ານກົດໝາຍ
- ການບໍລິຫານໂຄງການ, ການກວດກາ ແລະ ປະເມີນຜົນ, ແລະ ການເຜີຍແຜ່ຄວາມຮູ້

ສຳລັບຂໍ້ມູນອັບເດດຂອງໂຄງການນີ້ແມ່ນຈະມີການນຳສະເໜີອີກໃນສະບັບຖັດໄປຂອງຈົດໝາຍຂ່າວພວກເຮົາ.

## ບົດສຶກສາການເຂົ້າເຖິງ ,ນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມປະເພນີຂອງແມ່ຍິງ ໃນລາວ

ຈາກບົດສຶກສາກ່ອນໜ້ານີ້ ກ່ຽວກັບ ສິດທິທີ່ດິນຂອງແມ່ຍິງໃນລາວ ໂດຍ LIWG ໄດ້ພົບວ່າ ເມື່ອມີການລົງທຶນເພີ່ມຂື້ນ ແລະ ມີການປ່ຽນຜ່ານດ້ານກະສິກຳ ແມ່ນໄດ້ເຮັດໃຫ້ແມ່ຍິງສູນເສຍສິດການເຂົ້າເຖິງ ແລະ ການຄອບຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ຈາກຜົນຂອງການສຶກສາດັ່ງກ່າວ ພ້ອມດ້ວຍສະພາບຄວາມເປັນຈິງ ທີ່ແມ່ຍິງໄດ້ອາໄສຊັບພະຍາກອນທຳມະຊາດ ໂດຍສະເພາະໃນເຂດປ່າໄມ້ ເພື່ອການດຳລົງຊີວິດ ແມ່ນສະແດງໃຫ້ເຫັນເຖິງຄວາມຈຳເປັນຢ່າງຍິ່ງໃນການທຳຄວາມເຂົ້າໃຈໃຫ້ຫຼາຍຂື້ນກ່ຽວກັບວ່າ ແມ່ຍິງມີການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຄືແນວໃດ, ການປະຕິບັດການຄອບຄອງ ແລະ ຄຸ້ມຄອງຕາມປະເພນີມີຜົນຄືແນວໃດ ແລະ ມີຄວາມເປັນໄປໄດ້ແນວໃດແດ່ໃນການເພີ່ມຄວາມໝັ້ນຄົງໃນການຄອບຄອງທີ່ດິນຂອງແມ່ຍິງໃນຂັ້ນຊຸມຊົນ.

ການເຮັດບົດສຶກສາຫົວຂໍ້ **ການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມປະເພນີຂອງແມ່ຍິງ ໃນລາວ** ແມ່ນພາກສ່ວນໜຶ່ງຂອງ ແຜນງານການຮັບຮູ້ສິດທິຕາມປະເພນີ ຂອງໂຄງການ MRLG ໂດຍບົດສຶກສານີ້ ກໍ່ຈະເປັນສ່ວນໜຶ່ງໃນການສຶກສາ ເພື່ອຮັບປະກັນວ່າ ສິດທິການຄອບຄອງທີ່ດິນຢູ່ໃນເຂດປ່າໄມ້ ໄດ້ຮັບການຮັບຮູ້, ຈັດຕັ້ງປະຕິບັດ ແລະ ປົກປ້ອງ ເພື່ອເປັນສ່ວນໜຶ່ງໃນການຮັບປະກັນເຂົ້າໃນການປະຕິບັດກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້.

ພ້ອມນັ້ນ ກໍລະນີສຶກສານີ້ຈະຊີ້ໃຫ້ເຫັນເຖິງສະພາບຄວາມເປັນຈິງໃນພື້ນທີ່ ພ້ອມດ້ວຍຂໍ້ສະເໜີແນະຕ່າງໆໃນການປະຕິບັດ ກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ ທີ່ໃຫ້ຄວາມສຳຄັນເຖິງຄວາມສະເໝີພາບລະຫວ່າງຍິງຊາຍຍິ່ງຂື້ນ ໂດຍຜ່ານການປະຕິບັດຕາມການແນະນຳ ຫຼື ວິທີອື່ນໆທີ່ກ່ຽວຂ້ອງ.

ສຳລັບບົດສຶກສານີ້ ແມ່ນຍັງຢູ່ໃນຂັ້ນຕອນການວິເຄາະ ແລະ ສະຫຼຸບ ເຊິ່ງຫຼັງຈາກສຳເລັດແລ້ວ ພວກເຮົາຈະເຜີຍແຜ່ລົງໃນເວັບໄຊ້ພວກເຮົາ ເພື່ອໃຫ້ບັນດາທ່ານສາມາດດາວໂລດໄດ້.

# ໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ ແລະ ກຸ່ມຍ່ອຍ



## ກອງປະຊຸມ ຂະແໜງການຍ່ອນທີ່ດິນ (LSSWG)

ເພື່ອເປັນການລາຍງານຜົນຂອງກິດຈະກຳຕ່າງໆທີ່ມີການປະຕິບັດມາໃນປີ 2020 ແລະ ເພື່ອສະເໜີແຜນວຽກປີ 2021 ກົມທີ່ດິນ (ກຊສ) ໄດ້ມີການຈັດກອງປະຊຸມ ຂະແໜງການຍ່ອຍທີ່ດິນ (LSSWG) ຂຶ້ນໃນວັນທີ 19 ມັງກອນ 2021 ເຊິ່ງກໍ່ໄດ້ມີການນຳສະເໜີຫຼາຍປະເດັນຄື:

- ແຜນງານ 5 ປີ (2021-2025) ຂອງກົມທີ່ດິນ
- ລາຍງານກ່ຽວກັບຜົນຂອງວຽກໃນປີທີ່ຜ່ານມາ ແລະ ແຜນວຽກໃນປີນີ້ໂດຍຈະສຸມໃສ່: (i) ກຸ່ມຍ່ອຍຄົ້ນຄວ້ານິຕິກຳລຸ່ມກົດໝາຍ; (ii) ກຸ່ມຍ່ອຍການລົງທຶນແບບຍືນຍົງ; (iii) ກຸ່ມຍ່ອຍການຮັບຮູ້ສິດຕາມປະເພນີ ໃນສາມປະເພດປ່າ; (iv) ກຸ່ມຍ່ອຍການສັງລວມ ແລະ ແລກປ່ຽນຂໍ້ມູນທີ່ດິນ
- ນຳສະເໜີແຜນສະໜັບສະໜູນ ໂຄງການຂຶ້ນທະບຽນອອກໃບຕາດິນ ດ້ວຍເງິນກູ້ຢືມຈາກທະນາຄານໂລກ
- ສົນທະນາ ກ່ຽວກັບໂຄງການ ການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ໂດຍຜ່ານການປະຊຸມອອນລາຍກັບ ຕົວແທນຈາກທະນາຄານໂລກ ແລະ ທະນາຄານພັດທະນາຂອງປະເທດເຢຍລະມັນ ຫຼື KfW

ໃນກອງປະຊຸມຍັງມີການ ສົນທະນາກ່ຽວກັບການສະເໜີຂອງແຕ່ລະກຸ່ມ, ປຶກສາຫາລື ກ່ຽວກັບທິດທາງແຜນການ ແລະ ວາງລະດັບຄາດໝາຍຂອງຂະແໜງການຍ່ອຍທີ່ດິນດ້ວຍ.

ກອງປະຊຸມຄັ້ງນີ້ ເປັນຄັ້ງທຳອິດປະຈຳປີນີ້ ເຊິ່ງກອງປະຊຸມຄັ້ງທີ 2 ແມ່ນຈະມີການຈັດຂຶ້ນໃນເດືອນ ພຶດສະພາ ປີນີ້ ເຊິ່ງກອງເລຂາກໍ່ຈະສົ່ງໜັງສືບັດເຊີນຂອງກອງປະຊຸມນີ້ໃຫ້ແກ່ບັນດາສະມາຊິກ LIWG ເພື່ອເປັນໂອກາດທີ່ດີໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

## ກອງປະຊຸມກຸ່ມຍ່ອຍ ດ້ານການຮັບຮູ້ສິດທິຕາມປະເພນີໃນເຂດປ່າໄມ້

ເພື່ອເປັນການສືບຕໍ່ຈາກກອງປະຊຸມ ຂະແໜງການຍ່ອຍທີ່ດິນ ທີ່ໄດ້ຈັດຂຶ້ນໃນເດືອນ ມັງກອນ 2021 ນັ້ນ ທາງກົມທີ່ດິນ ແລະ ໂຄງການ MRLG ໄດ້ມີການຈັດກອງປະຊຸມ ກຸ່ມຍ່ອຍດ້ານການຮັບຮູ້ສິດທິຕາມປະເພນີ (CTR) ໃນເຂດປ່າໄມ້ ຂຶ້ນໃນວັນທີ 11 ກຸມພາ 2021.

ເທື່ອນີ້ແມ່ນການປະຊຸມຄັ້ງທຳອິດຂອງກຸ່ມຍ່ອຍນີ້ ທີ່ໄດ້ຈັດຂຶ້ນເພື່ອ ແລກປ່ຽນຄຳຄິດເຫັນ ບັນດາກິດຈະກຳທີ່ກ່ຽວ ຂ້ອງ ຈາກບັນດາອົງການຈັດຕັ້ງ ຫຼື ໜ່ວຍງານທີ່ເຮັດວຽກກ່ຽວຂ້ອງກັບການຮັບຮູ້ສິດທິຕາມປະເພນີ ໃນເຂດປ່າໄມ້ ເພື່ອເປັນການປະສານງານ ແລະ ສົ່ງເສີມການຮ່ວມມືກັນຂອງບັນດາອົງການຈັດຕັ້ງຕ່າງໆຕໍ່ກັບວຽກງານດັ່ງກ່າວ.

ໃນກອງປະຊຸມ ກົມທີ່ດິນ ໄດ້ສະເໜີຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ແຜນວຽກງານໃນຕໍ່ໜ້າຂອງໂຄງການທົດລອງໃນແຂວງຄຳມ່ວນ. ນອກນັ້ນ ໃນກອງປະຊຸມກໍ່ຍັງໄດ້ມີການນຳສະເໜີ ເພື່ອປຶກສາຫາລືກ່ຽວກັບ ຄວາມເຂົ້າໃຈຕໍ່ຄຳຖາມທີ່ວ່າ ສາມາດອອກໃບຕາດິນໃນເຂດທີ່ດິນປ່າໄມ້ໄດ້ຫຼືບໍ?.

ຈາກການນຳສະເໜີດັ່ງກ່າວ ບັນດາຜູ້ເຂົ້າຮ່ວມກໍ່ໄດ້ມີການສົນທະນາແລກປ່ຽນຄຳຄິດເຫັນ ແລະ ຮ່ວມກັນຄົ້ນຄວ້າຄວາມເປັນໄປໄດ້ໃນການປະສານງານເພື່ອເຮັດວຽກຮ່ວມກັນຂອງບັນດາອົງການຈັດຕັ້ງ ທີ່ເຮັດວຽກກ່ຽວກັບການຮັບຮູ້ສິດທິຕາມປະເພນີ ໃນເຂດປ່າໄມ້ໃນລາວ.

ກອງປະຊຸມຂອງກຸ່ມຍ່ອຍນີ້ ແມ່ນຈະມີການຈັດຢ່າງເປັນປະຈຳ ເຊິ່ງບັນດາສະມາຊິກຂອງ LIWG ແມ່ນສາມາດເຂົ້າຮ່ວມໄດ້ ເພື່ອເປັນສ່ວນໜຶ່ງໃນການສົນທະນາ ແລະ ປຶກສາຫາລື ກ່ຽວກັບ ຫົວຂໍ້ ແລະ ປະເດັນທີ່ກ່ຽວຂ້ອງດັ່ງກ່າວ.

## ກອງປະຊຸມກຸ່ມຍ່ອຍ ດ້ານການສັງລວມ ແລະ ແລກປ່ຽນຂໍ້ມູນທີ່ດິນ

ກຸ່ມຍ່ອຍການສັງລວມ ແລະ ແລກປ່ຽນຂໍ້ມູນ ແມ່ນກຸ່ມຍ່ອຍໜຶ່ງພາຍໃຕ້ຂະແໜງການຍ່ອຍທີ່ດິນ ເຊິ່ງໄດ້ມີການຈັດກອງປະຊຸມຄັ້ງທຳອິດ ໃນວັນທີ 30 ມີນາ 2021 ທີ່ຜ່ານມານີ້ ເພື່ອແນະນຳວຽກງານຂອງກຸ່ມ ແລະ ນຳສະເໜີບັນດາກິດຈະກຳຕ່າງໆຂອງກຸ່ມ ກ່ຽວກັບລະບົບແລກປ່ຽນຂໍ້ມູນທີ່ດິນໃນລາວ.

ກອງປະຊຸມນີ້ ແມ່ນໄດ້ນຳສະເໜີກ່ຽວກັບລະບົບການແລກປ່ຽນຂໍ້ມູນດ້ານທີ່ດິນ (LIS) ທີ່ມີຢູ່ໃນປະເທດລາວເຊັ່ນ:

- ຖານຂໍ້ມູນການຂຶ້ນທະບຽນທີ່ດິນ (LLReg) ເຊິ່ງສາມາດເບິ່ງຂໍ້ມູນເພີ່ມເຕີມທີ່ກ່ຽວຂ້ອງໄດ້ ທີ່ນີ້
- ຖານຂໍ້ມູນການວາງແຜນນຳໃຊ້ທີ່ດິນ ໃນລາວ (LUIS) ເຊິ່ງສາມາດເບິ່ງຂໍ້ມູນລະບົບນີ້ໄດ້ ທີ່ນີ້
- ຖານການເຊົ່າ ແລະ ສຳປະທານທີ່ດິນລັດ ຫຼື SLLC (ລະບົບແມ່ນຢູ່ໃນຂັ້ນຕອນການພັດທະນາ) ແຕ່ສາມາດເຂົ້າເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບ ການເຊົ່າ ແລະ ສຳປະທານທີ່ດິນໃນລາວໄດ້ ທີ່ນີ້

ນອກນີ້ຕົວແທນຈາກ UN-Habitat ຍັງໄດ້ນຳສະເໜີໂດຍລວມກ່ຽວກັບໂປຣແກມ ການຄຸ້ມຄອງຊັບພະຍາກອນທຳ ມະຊາດ ທີ່ເຊື່ອມໂຍງກັບສັງຄົມ (Social Tenure Domain Model Laos-STDM) ເພື່ອໃຊ້ເຂົ້າໃນວຽກງານການສຳຫຼວດ-ວັດແທກຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນ ທີ່ໄດ້ເຮັດວຽກຮ່ວມກັບອົງການ VFI ໃນການປະຕິບັດວຽກງານດັ່ງກ່າວ ທີ່ແຂວງ ຊຽງຂວາງ ແລະ ຫຼວງພະບາງ. ເບິ່ງຂໍ້ມູນກ່ຽວກັບ STDM ໄດ້ ທີ່ນີ້




*ພາບລວມລະບົບຄຸ້ມຄອງຂໍ້ມູນກ່ຽວກັບທີ່ດິນໃນລາວ. ແຜນວາດໂດຍ ກົມທີ່ດິນ/GIZ Laos*

ກອງປະຊຸມ ມີຜູ້ເຂົ້າຮ່ວມຈາກຫຼາຍໜ່ວຍງານເຂົ້າຮ່ວມ ເພື່ອແລກປ່ຽນບົດຮຽນ ແລະ ປຶກສາຫາລືກ່ຽວກັບການເຊື່ອມໂຍງແຕ່ລະລະບົບເຂົ້າກັນ ເພື່ອໃຫ້ແຕ່ລະພາກສ່ວນສາມາດເຊື່ອມຕໍ່ຂໍ້ມູນ ແລະ ໃຊ້ລະບົບຂໍ້ມູນອັນດຽວກັນ.

ເຊັ່ນດຽວກັນກັບກຸ່ມຍ່ອຍອື່ນໆ ກຸ່ມຍ່ອຍນີ້ກໍ່ຈະມີການຈັດກອງປະຊຸມເລື້ອຍໆ ເພື່ອອັບເດດຂໍ້ມູນ ແລະ ວາງແຜນເຮັດວຽກຮ່ວມກັນ ເຊິ່ງບັນດາສະມາຊິກຂອງ LIWG ແມ່ນສາມາດເຂົ້າຮ່ວມໄດ້ ໂດຍຜ່ານກອງເລຂາ ເຊິ່ງຈະມີການແຈ້ງໃນແຕ່ລະໄລຍະໃຫ້ບັນດາສະມາຊິກໄດ້ຮັບຮູ້ຕໍ່ກັບກອງປະຊຸມວຽກງານນີ້.

ກອງປະຊຸມນີ້ແມ່ນຈັດໂດຍ ກົມທີ່ດິນ ແລະ ອົງການ GIZ ລາວ.

# ກິດຈະກຳໂຄງການໄລຟ໌




## ກອງປະຊຸມລິເລີ່ມໂຄງການສ້າງຄວາມສາມາດໃນການຄຸ້ມຄອງດິນກະສິກຳ (SALM) ທີ່ແຂວງຄຳມ່ວນ

ຫຼັງຈາກທີ່ມີການເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ອົງການ VFI (ທີ່ເປັນຕົວແທນຂອງໂຄງການໄລຟ໌ ໃນການເຊັນໃນຄັ້ງນີ້) ກັບ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ (DaLAM) ພາຍໃຕ້ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອປະຕິບັດ **ໂຄງການສ້າງຄວາມສາມາດໃນການຄຸ້ມຄອງດິນກະສິກຳ (SALM)** ມາເຖິງເດືອນ ກຸມພາ 2021 ຈຶ່ງໄດ້ມີການຈັດກອງປະຊຸມລິເລີ່ມໂຄງການນີ້ຂຶ້ນ ທີ່ແຂວງຄຳມ່ວນ ໂດຍມີຜູ້ໃຫ້ທຶນຂອງໂຄງການໄລຟ໌ ຈາກ ສະຫະພາບເອີຣົບປະຈຳລາວ ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ດ້ວຍ.





ສຳລັບໂຄງການ SALM ນີ້ ໂຄງການໄລຟ໌ ຈະໄດ້ຈັດການຝຶກອົບຮົມຢ່າງໃກ້ຊິດໃຫ້ແກ່ DaLAM ແລະ ຄູ່ຮ່ວມງານຕ່າງໆຈາກຂັ້ນແຂວງ ແລະ ເມືອງ ພ້ອມດ້ວຍຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ຫ້ອງການສະຫະພັນແມ່ຍິງລາວ ແລະ ສູນການແນວທາງສ້າງຊາດຈາກເມືອງ ມະຫາໄຊ ແລະ ຍົມມະລາດ ຈາກແຂວງ ຄຳມ່ວນ. ພ້ອມນັ້ນ ກໍ່ຈະມີການເກັບກຳກໍລະນີສຶກສາ ແລະ ພັດທະນາຄູ່ມືການຝຶກອົບຮົມໃນການປະຕິບັດກິດຈະກຳຄັ້ງນີ້ດ້ວຍ.

ສຳລັບການປະຕິບັດໂຄງການຄັ້ງນີ້ ໂຄງການໄລຟ໌ ຈະເຮັດວຽກຮ່ວມກັບ ສະມາຄົມ ສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ (PSNUA) ແລະ ຄູ່ຮ່ວມງານພາກລັດ ໃນການເສີມສ້າງຄວາມອາດສາມາດ ເພື່ອນຳເອົາຄວາມຮູ້ ແລະ ທັກສະຈາກການຝຶກອົບຮົມນັ້ນໄປປະຕິບັດໃນຂັ້ນທ້ອງຖິ່ນ ໃນການເຜີຍແຜ່ຂໍ້ມູນກ່ຽວກັບສິດທິທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ແກ່ປະຊາຊົນໃນ 12 ບ້ານເປົ້າໝາຍ.

ລາຍລະອຽດກ່ຽວກັບການປະຕິບັດກິດຈະກຳພາຍໃນໂຄງການນີ້ແມ່ນຈະມີການນຳສະເໜີໃຫ້ຜູ້ອ່ານໄດ້ຮັບຮູ້ໃນຈົດໝາຍຂ່າວເຮົາໃນສະບັບຕໍ່ໆໄປ ຫຼື ສາມາດຕິດຕາມໄດ້ທີ່ ເວັບໄຊ້ ພວກເຮົາ.

## ການຕິດຕາມປະເມີນຜົນ ແລະ ໃຫ້ຄວາມຮູ້ເພີ່ມເຕີມ ການຈັດຕັ້ງປະຕິບັດວຽກງານປະຊາສຳພັນ ຂອງໂຄງການທົດລອງ ຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ຢູ່ໃນເຂດ 3 ປະເພດປ່າ



ນັບຕັ້ງແຕ່ປີ 2020 ເປັນຕົ້ນມາ ໂຄງການໄລຟ໌ ໄດ້ສະໜອງການສະໜັບສະໜູນ ໂຄງການ MRLG ແລະ ກົມທີ່ດິນ ໃນວຽກງານການເສີມສ້າງຄວາມອາດສາມາດ ພາຍໃຕ້ແຜນງານ ການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ຢູ່ໃນເຂດ 3 ປະເພດປ່າ. ສຳລັບແຜນງານນີ້ ໂຄງການໄລຟ໌ ໄດ້ສະໜອງການຝຶກອົບຮົມແບບໃກ້ຊິດເພື່ອເສີມສ້າງຄວາມອາດສາມາດ ກ່ຽວກັບກົດໝາຍ ແລະ ກົດລະບຽບກ່ຽວກັບສິດນຳໃຊ້ທີ່ດິນຕາມປະເພນີ ແກ່ ສະຫະພັນແມ່ຍິງລາວ ແລະ ສູນກາງແນວລາວສ້າງຊາດ ເພື່ອໃຫ້ເຂົາເຈົ້າສາມາດນຳເອົາຄວາມຮູ້ ແລະ ວິທີການຕ່າງໆ ປະກອບເຂົ້າໃນວຽກງານການເຜີຍແຜ່ຂໍ້ມູນ ແລະ ປຸກລະດົມປະຊາຊົນເຂົ້າໃນຂະບວນການຂຶ້ນທະບຽນອອກໃບຕາດິນ ໃນເຂດ 3 ປະເພດປ່າ.



ຫຼັງຈາກທີ່ມີການຝຶກອົບຮົມໃຫ້ແກ່ໜ່ວຍງານດັ່ງກ່າວແລ້ວ ທາງໂຄງການໄລຟ໌ ຮ່ວມກັບໂຄງການ MRLG ແລະ ກົມທີ່ດິນ ໄດ້ປະຕິບັດກິດຈະກຳການຕິດຕາມປະເມີນຜົນ ແລະ ໃຫ້ຄວາມຮູ້ເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຊາສຳພັນ ຂອງໂຄງການທົດລອງຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ຢູ່ໃນເຂດ 3 ປະເພດປ່າ ໃນເມືອງຫີນບູນ, ນາກາຍ ແລະ ເຊບັ້ງໄຟ ຢູ່ແຂວງຄຳມ່ວນ ເພື່ອເກັບກຳຂໍ້ມູນຜົນຈາກການຝຶກອົບຮົມໃນປີ 2020 ຂອງໂຄງການໄລຟ໌ແກ່ໜ່ວຍງານພາກລັດຂັ້ນທ້ອງຖິ່ນເຊັ່ນ ຫ້ອງການສະຫະພັນແມ່ຍິງລາວ, ສູນກາງແນວລາວສ້າງຊາດ ແລະ ຊຸມຊົນກ່ຽວກັບຄວາມເຂົ້າໃຈ ສິດທິທີ່ດິນຕາມປະເພນີ.

ໃນປັດຈຸບັນນີ້ ໂຄງການໄລຟ໌ ກຳລັງສະຫຼຸບຂໍ້ມູນທີ່ເກັບກຳໄດ້ຈາກພື້ນທີ່ ເພື່ອປະເມີນເຖິງອຸປະສັກ ແລະ ຄວາມທ້າທາຍຂອງຂະບວນການຂຶ້ນທະບຽນອອກໃບຕາດິນໃນເຂດ 3 ປະເພດປ່າ ແລະ ຜົນຈາກການຝຶກອົບຮົມຂອງໂຄງການໄລຟ໌ ກ່ຽວກັບຄວາມຮູ້ ແລະ ຄວາມເຂົ້າໃຈຂອງຄູ່ຮ່ວມງານພາກລັດ ແລະ ຊຸມຊົນກ່ຽວກັບຫົວຂໍ້ດັ່ງກ່າວ.

## ການຝຶກອົບຮົມ ການນຳໃຊ້ປະຕິທິນກົດໝາຍປີ 2021 ທີ່ແຂວງອຸດົມໄຊ



ໃນເດືອນ ມັງກອນ 2021 ທີ່ຜ່ານມາ ໄລຟ໌ ໄດ້ຈັດການຝຶກອົບຮົມໃຫ້ແກ່ບັນດາສະມາຊິກຂອງ LIWG ທີ່ແຂວງ ອຸດົມໄຊ ກ່ຽວກັບການນຳໃຊ້ປະຕິທິນກົດໝາຍປີ 2021. ການຝຶກອົບຮົມຄັ້ງນີ້ ແມ່ນຈັດໂດຍ ອົງການ CCL ປະຈຳລາວ ເຊິ່ງເປັນໜຶ່ງໃນສະມາຊິກຂອງ LIWG ດ້ວຍ.

ໃນການຝຶກອົບຮົມຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 18 ທ່ານ ຈາກບັນດາອົງການຕ່າງໆເຊັ່ນ: ອົງການ CCL, CORD, World Renew, CDEA ແລະ GCA ພ້ອມດ້ວຍບັນດາຄູ່ຮ່ວມງານທາງພາກລັດຈາກຂັ້ນແຂວງ ແລະ ເມືອງເຂົ້າຮ່ວມດ້ວຍ.

ການຝຶກອົບຮົມຄັ້ງນີ້ ແມ່ນເນັ້ນໃສ່ ການເສີມສ້າງຄວາມອາດສາມາດແກ່ຜູ້ເຂົ້າຮ່ວມໃນການເປັນຜູ້ເຜີຍແຜ່ຂໍ້ມູນ ໂດຍການນຳໃຊ້ວິທີການຕ່າງໆ ພ້ອມດ້ວຍເຄື່ອງມືອື່ນໆປະກອບເຂົ້າໃນກິດຈະກຳການແຈກຢາຍປະຕິທິນກົດໝາຍໃນເຂດພື້ນທີ່ເປົ້າໝາຍຂອງແຕ່ລະອົງການ. ໂດຍສະເພາະໃນມື້ສຸດທ້າຍຂອງການຝຶກອົບຮົມ ຜູ້ເຂົ້າຮ່ວມໄດ້ມີການລົງປະຕິບັດຕົວຈິງໃນການເຜີຍແຜ່ຂໍ້ມູນ ແລະ ຄວາມຮູ້ໃນປະຕິທິນກົດໝາຍ ແກ່ປະຊາຊົນໃນເຂດບ້ານເປົ້າໝາຍຂອງອົງການ CCL ໂດຍມີປະຊາຊົນເຂົ້າຮ່ວມເຖິງ 56 ຄົນ ໃນກິດຈະກຳດັ່ງກ່າວ.

ກິດຈະກຳປະຕິບັດຕົວຈິງ ແມ່ນເປັນຂັ້ນຕອນທີ່ສຳຄັນຫຼາຍຂອງການຝຶກອົບຮົມ ເພາະເປັນໂອກາດທີ່ດີຕໍ່ຜູ້ເຂົ້າຮ່ວມຝຶກອົບຮົມ ໃຫ້ໄດ້ນຳໃຊ້ທັກສະ ແລະ ເຄື່ອງມືທີ່ຮຽນຮູ້ຈາກການຝຶກອົມຮົມມາປະກອບເຂົ້າໃນການປະຕິບັດຕົວຈິງ.

ທ່ານສາມາດສຶກສາເບິ່ງ ປຶ້ມຄູ່ມືແນະນຳການນຳໃຊ້ປະຕິທິນກົດໝາຍເຂົ້າໃນການຝຶກອົບຮົມໄດ້ ທີ່ນີ້

# ບົດຄວາມ ແລະ ວິດີໂອແນະນຳ



## ບົດຄວາມແນະນຳອ່ານ

### ການຄອບຄອງທີ່ດິນຕາມປະເພນີ: ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີແມ່ນແນວໃດ?



ອີງຕາມມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງ (2019) ໄດ້ກຳນົດວ່າ ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ເປັນປົກກະຕິເປັນເວລາຫຼາຍກວ່າ ຊາວປີກ່ອນ ກົດໝາຍສະບັບທີ່ດິນ (ສະບັບປັດຈຸບັນ) ມີຜົນສັກສິດ ໂດຍບໍ່ມີເອກະສານໃດໆຢັ້ງຢືນການໄດ້ມາຂອງທີ່ດິນ ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບການເຂົ້າຄອບຄອງ ແລະ ນຳໃຊ້ທີ່ດິນນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ຂໍ້ຂັດແຍ່ງດັ່ງກ່າວໄດ້ຮັບການແກ້ໄຂແລ້ວ. *ອ່ານບົດຄວາມນີ້ທີ່:* https://bit.ly/3jah9p1

### ການຂຶ້ນທະບຽນອອກໃບຕາດິນ: ປະຕິທິນກົດໝາຍປະຈຳເດືອນ ມັງກອນ – ກຸມພາ 2021



ຈຸດປະສົງຫຼັກໃນການນຳສະເໜີຫົວຂໍ້ ການຂຶ້ນທະບຽນອອກໃບຕາດິນ ໃນປະຕິທິນປະຈຳເດືອນ ມັງກອນ – ກຸມພາ 2021 ນີ້ ແມ່ນເພື່ອເປັນການສະແດງໃຫ້ເຫັນເຖິງການກຽມພ້ອມກ່ຽວກັບບາດກ້າວ ແລະ ຂັ້ນຕອນຕ່າງໆໃນການຂຶ້ນທະບຽນອອກໃບຕາດິນທີ່ເປັນເອກະສານຢັ້ງຢືນສິດອັນຄົບຖ້ວນໜຶ່ງດຽວຂອງຜູ້ທີ່ເປັນເຈົ້າຂອງຕອນດິນ.
*ເບິ່ງໜ້າປະຕິທິນນີ້ ແລະ ອ່ານເນື້ອໃນຫົວຂໍ້ນີ້ໄດ້ທີ່:* https://bit.ly/3ogOoYA

### ລາວສູນເສຍເນື້ອທີ່ປ່າໄມ້ກວ່າ 945,000 ເຮັກຕາ ໃນຊ່ວງປີ 2000-2015 ທີ່ຜ່ານມາ



ຈາກ ບົດສຶກສາ ການສູນເສຍເນື້ອທີ່ປ່າໄມ້ຈາກການປູກພືດເປັນສິນຄ້າ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ໂດຍອົງການ USAID ໃຫ້ຮູ້ວ່າ ປະເທດລາວເຮົາ ໄດ້ສູນເສຍເນື້ອທີ່ປ່າໄມ້ກວ່າ 945,000 ເຮັກຕາ ໃນຊ່ວງປີ 2000-2015 ທີ່ຜ່ານມາ ເຊິ່ງ 500,000 ກວ່າເຮັກຕາ ຈາກຈຳນວນດັ່ງກ່າວແມ່ນຖືກປ່ຽນໄປເປັນພື້ນທີ່ການເຮັດກະສິກຳ ແລະ ທີ່ດິນປ່າໄມ້ກວ່າ 50% ທີ່ຖືກປ່ຽນເປັນເນື້ອທີ່ກະສິກຳນັ້ນ ສ່ວນໃຫຍ່ແມ່ນເປັນການປູກພືດດ່ຽວ ເຊັ່ນ: ສາລີ, ມັນຕົ້ນ ແລະ ອ້ອຍ ສ່ວນທີ່ເຫຼືອແມ່ນປູກຕົ້ນໄມ້ອຸດສາຫະກຳ ເຊັ່ນ ຢາງພາລາ ແລະ ຕົ້ນໄມ້ເພື່ອຜະລິດເປັນເຈ້ຍ.

*ອ່ານບົດຄວາມນີ້ທີ່:* https://bit.ly/3chFg3n *ແລະ ເບິ່ງເພີ່ມເຕີມ* ທີ່ນີ້

### Nia Tero "ແຜ່ນດິນຂອງເຮົາ": ລະບົບນິເວດທີ່ດີຂອງໂລກ ແມ່ນຊຸມຊົນຊົນເຜົ່າເກືອບເຄິ່ງໜຶ່ງຂອງທົ່ວໂລກຊ່ວຍກັນດູແລ ແລະ ປົກປັກຮັກສາ



ຊຸມຊົນເຜົ່າ ຄວນຈະຢູ່ໃນທ້ອງຖິ່ນບ້ານເກີດຂອງພວກເຂົາໃນປ່າ ຫຼື ຄວນຈະໃຫ້ພວກເຂົາອອກມາຢູ່ນອກປ່າ ແລ້ວກັນເອົາພື້ນທີ່ດັ້ງເດີມຂອງພວກເຂົານັ້ນເປັນເຂດສະຫງວນ, ທ່ານຄິດວ່າອັນໃດເປັນວິທີທີ່ດີກວ່າກັນ? ນີ້ເປັນຄຳຖາມທີ່ບໍ່ແມ່ນສະເພາະທ້ອງຖິ່ນໃດທ້ອງຖິ່ນໜຶ່ງເທົ່ານັ້ນ ແຕ່ເປັນຄຳຖາມທີ່ມີການຖາມ ແລະ ໂຕ້ຖຽງກັນມາໃນຫຼາຍພື້ນທີ່ທົ່ວໂລກມາເປັນເວລາອັນຍາວນານ.
ບົດຄວາມນີ້ແມ່ນນຳສະເໜີຂໍ້ມູນທີ່ສະແດງໃຫ້ເຫັນເຖິງຄວາມສຳຄັນວ່າ ການທີ່ໃຫ້ຊຸມຊົນທີ່ດຳລົງຊີວິດທີ່ຢູ່ໃນພື້ນທີ່ເປັນຜູ້ທີ່ອະນຸລັກຮັກສາປ່າໄມ້ ແມ່ນເປັນວິທີການທີ່ມີປະສິດທິພາບຫຼາຍກວ່າ ແທນທີ່ຈະຍຶດຕິດກັບການອະນຸລັກແບບເກົ່າທີ່ເບິ່ງວ່າຄົນທ້ອງຖິ່ນນັ້ນເປັນຜູ້ທຳລາຍປ່າ.
*ອ່ານບົດຄວາມນີ້ທີ່:* https://bit.ly/3l9MRDD *ແລະ ເບິ່ງເພີ່ມເຕີມ* ທີ່ນີ້

# ວິດີໂອແນະນໍາປະຈໍາໄຕມາດ




## ປະຕິທິນກົດໝາຍ: ສື່ການຮຽນຮູ້ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ

ກວ່າ 10 ປີ ທີ່ຜ່ານມາປະຕິທິນກົດໝາຍໄດ້ມີການແຈກຢາຍ ແລະ ເຜີຍແຜ່ແກ່ຫຼາຍຊຸມຊົນໂດຍ ບັນດາສະມາຊິກ ແລະ ຄູ່ຮ່ວມງານຂອງ LIWG. ສະນັ້ນ ວິດີໂອນີ້ແມ່ນໄດ້ນໍາສະເໜີກ່ຽວກັບຄວາມສໍາຄັນ ແລະ ບົດຮຽນທີ່ດີຈາກການເຜີຍແຜ່ປະຕິທິນກົດໝາຍແກ່ປະຊາຊົນ ແລະ ໜ່ວຍງານທີ່ກ່ຽວຂ້ອງ ເພື່ອການຮັບຮູ້ ກົດໝາຍກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ.

ເບິ່ງວິດີໂອນີ້ທີ່: https://youtu.be/2Xmv7cfC3jk




## ການຝຶກອົບຮົມ ນໍາໃຊ້ປະຕິທິນກົດໝາຍ ເພື່ອເຜີຍແຜ່ຂໍ້ມູນກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ

ທາງທີມງານໂຄງການໄລຟ໌ ແລະ ກອງເລຂາ LIWG ໄດ້ຈັດຝຶກອົບຮົມການເປັນຄູຝຶກ ໃຫ້ແກ່ບັນດາສະມາຊິກ ແລະ ຄູ່ຮ່ວມງານ ເພື່ອເປັນການເພີ່ມທັກສະ ການເປັນຜູ້ເຜີຍແຜ່ປະຕິທິນກົດໝາຍ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດໃນຂັ້ນຊຸມຊົນ ໂດຍສະເພາະການນໍາໃຊ້ວິທີການທີ່ຫຼາກຫຼາຍໃນການເຜີຍແຜ່ຂໍ້ມູນ.

ວິດີໂອນີ້ແມ່ນລວມເອົາຄໍາຄິດເຫັນຂອງຜູ້ເຂົ້າຮ່ວມ ແລະ ຄູຝຶກກ່ຽວກັບຜົນໄດ້ຮັບຈາກການຝຶກອົບຮົມຄັ້ງນີ້.

ເບິ່ງວິດີໂອນີ້ທີ່: https://youtu.be/9eKIF2cvUWw




## ງານນໍາສະເໜີບົດສຶກສາ ແມ່ຍິງ ແລະ ສິດນໍາໃຊ້ທີ່ດິນ ຢູ່ສປປ ລາວ

ໃນວັນທີ 14 ຕຸລາ 2020 ກອງເລຂາ LIWG ຮ່ວມກັບ ສູນບໍລິການກົດໝາຍເພື່ອປະຊາຊົນ ຈາກຄະນະນິຕິສາດ ແລະ ລັດຖະສາດ, ມຊ ໄດ້ຮ່ວມຈັດກອງປະຊຸມ ນໍາສະເໜີການສຶກສາຄົ້ນຄ້ວາກ່ຽວກັບສິດທິຕໍ່ທີ່ດິນຂອງແມ່ຍິງ ໃນລາວ ເພື່ອເປັນການເຜີຍແຜ່ບົດສຶກສາແກ່ຄູ່ຮ່ວມງານ ແລະ ສົນທະນາກ່ຽວກັບຫົວຂໍ້ດັ່ງກ່າວ.

ວິດີໂອນີ້ ແມ່ນສະຫຼຸບສັງລວມບາງໃຈຄວາມສໍາຄັນຈາກງານນໍາສະເໜີ.

ເບິ່ງວິດີໂອນີ້ທີ່: https://youtu.be/vFyPqhvwt_U




## ໂຄງການ LIFE: ການລິເລີ່ມໃໝ່ເພື່ອປັບປຸງຈິດສໍານຶກດ້ານກົດໝາຍກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ

ໂຄງການ LIFE (ໄລຟ໌) ເປັນໂຄງການສ້າງຄວາມອາດສາມາດທີ່ມີເອກະລັກສະເພາະ ແນໃສ່ປັບປຸງຈິດສໍານຶກ, ຄວາມຮູ້ດ້ານກົດໝາຍ ແລະ ຄວາມອາດສາມາດ ເພື່ອຊ່ວຍເພີ່ມທະວີສິດທິການຄອບຄອງທີ່ດິນ.

ໃນໄລຍະຫຼາຍປີທີ່ຜ່ານ ໂຄງການໄລຟ໌ໄດ້ມີການຈັດການຝຶກອົບຮົມແບບໃກ້ຊິດແກ່ຫຼາຍພາກສ່ວນເຊັ່ນ: ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ ເຊິ່ງສ່ວນໃຫຍ່ແມ່ນບັນດາສະມາຊິກຂອງ LIWG ແລະ ໜ່ວຍງານພາກລັດທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ.

ເພື່ອເປັນການສະທ້ອນເຖິງຜົນໄດ້ຮັບທີ່ຜ່ານມາ ທາງໂຄງການໄລຟ໌ໄດ້ສ້າງວິດີໂອຂຶ້ນ ເພື່ອນໍາສະເໜີ ແລະ ສັງລວມແນວຄວາມຄິດເຫັນຂອງພາກສ່ວນທີ່ກ່ຽວຂ້ອງ ຕໍ່ກັບຜົນໄດ້ຮັບຂອງໂຄງການ.

ເບິ່ງວິດີໂອນີ້ທີ່: https://bit.ly/3o3HE0d



# ຂ່າວເດັ່ນປະຈຳໄຕມາດ

## ກຊສ ໄດ້ອອກແຈ້ງການ ໃຫ້ໂຈະ ແລະ ກວດກາຄືນ ການອອກໜັງສືຢັ້ງຢືນ ການນຳໃຊ້ທີ່ດິນປ່າໄມ້

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ອອກແຈ້ງການ ສະບັບເລກທີ 1423/ກຊສ, ໃຫ້ໂຈະ ແລະ ກວດກາຄືນ ການອອກໜັງສືຢັ້ງຢືນ ການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ໃນເຂດທີ່ດິນປ່າສະຫງວນ, ທີ່ດິນປ່າປ້ອງກັນ ແລະ ທີ່ດິນປ່າຜະລິດ ໃນຂອບເຂດທົ່ວປະເທດ ໃນວັນທີ 25 ມີນາ 2021.

ເຫດຜົນຫຼັກຂອງການອອກແຈ້ງການສະບັບນີ້ ແມ່ນເພື່ອເປັນການເພີ່ມທະວີການຄຸ້ມຄອງທີ່ດິນປ່າໄມ້ ແລະ ຮັບປະກັນການປະຕິບັດພາລະບົດບາດຄຸ້ມຄອງຂອງລັດ ແລະ ຄວາມສັກສິດຂອງກົດໝາຍຢ່າງເຂັ້ມງວດ.
ອ່ານເພີ່ມເຕີມທີ່: https://bit.ly/3dvCgRn

## ບໍລິສັດຈີນ ຈະຂໍສຳປະທານທີ່ດິນ ປະມານ 3,200 - 4,800 ເຮັກຕາ ເພື່ອປູກຖົ່ວລຽນຢູ່ລາວ

ປັດຈຸບັນປະເທດລາວ ມີພື້ນທີ່ໃນການປູກໝາກຖົ່ວລຽນສ່ວນໃຫຍ່ທີ່ແຂວງຈຳປາສັກ ແລະ ໄດ້ເລີ່ມມີນັກລົງທຶນຈີນສະເໜີຂໍສຳປະທານທີ່ດິນຈາກລັດຖະບານລາວ ເພື່ອປູກຖົ່ວລຽນ ປະມານ 3,200 – 4,800 ເຮັກຕາ (20,000 - 30,000 ໄຮ່).

ສາເຫດຫຼັກທີ່ເຮັດໃຫ້ການສົ່ງອອກຖົ່ວລຽນຂອງລາວເພີ່ມຂຶ້ນໃນໄລຍະນີ້ ແມ່ນຍ້ອນລາວມີຂໍ້ຕົກລົງການຄ້າເສລີ ຫຼື FTA ກັບຫຼາຍປະເທດ ເຊິ່ງໄດ້ຍົກເລີກການເກັບພາສີນຳເຂົ້າຈາກ 16 ປະເທດ ໃນນັ້ນປະກອບມີ ຈີນ, ອີຕາລີ, ນິວຊີແລນ, ຍີ່ປຸ່ນ ແລະ ອິນເດຍ ເປັນຕົ້ນ.

ອ່ານເພີ່ມເຕີມທີ່: https://bit.ly/37Jv8xp & ທີ່ນີ້

## ລັດຖະບານລາວ ໄດ້ອອກດຳລັດໃໝ່ ເພື່ອຫລຸດຜ່ອນໄພອັນຕະລາຍຕ່າງໆ ທີ່ຈະເກີດຂຶ້ນຈາກເຂື່ອນໄຟຟ້າຢູ່ໃນລາວ

ດຳລັດສະບັບໃໝ່ນີ້ ໄດ້ກຳນົດສະຖານະການທີ່ຜູ້ພັດທະນາເຂື່ອນໄຟຟ້າຕ້ອງໄດ້ມີການປະກາດແຈ້ງເຕືອນລ່ວງໜ້າໃຫ້ຮັບຮູ້ກ່ຽວກັບລະດັບນ້ຳຢູ່ລຸ່ມເຂື່ອນຫາກລະດັບນ້ຳ ເພີ່ມຂຶ້ນ ຫຼື ຫຼຸດລົງໃນຂັ້ນວິກິດ.

ໃນກໍລະນີຫາກມີການສູນເສຍ ຫຼື ເກີດຄວາມເສຍຫາຍ ທີ່ເກີດຈາກການເກັບກັກນ້ຳ ຫຼື ປ່ອຍນ້ຳອອກຈາກເຂື່ອນ ເຈົ້າຂອງໂຄງການຕ້ອງຮັບຜິດຊອບໃນການຊອກຫາວິທີທາງໃນການແກ້ໄຂ ແລະ ຕ້ອງສະໜັບສະໜູນທາງດ້ານການເງິນ ເພື່ອຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບທັງ ທາງດ້ານຮ່າງກາຍ ແລະ ຈິດໃຈ ຕະຫຼອດເຖິງ ຕ້ອງມີການຊົດເຊີຍຕໍ່ກັບຊັບສິນທີ່ໄດ້ຮັບຄວາມເສຍຫາຍດ້ວຍ.

ອ່ານເພີ່ມເຕີມທີ່: https://bit.ly/2QhthKL & ເບິ່ງດຳລັດສະບັບນີ້ໄດ້ ທີ່ນີ້

## ບໍລິສັດ ອຳມະຕະຂອງໄທ ກຳລັງສຳຫຼວດທີ່ດິນ ເພື່ອສ້າງເມືອງໃໝ່ຢູ່ ເມືອງນາໝໍ້ ແຂວງອຸດົມໄຊ

ບໍລິສັດ ອຳມະຕະ ຈາກປະເທດໄທ ກຳລັງຢູ່ໃນຂັ້ນຕອນສຳຫຼວດທີ່ດິນ ໃນເນື້ອທີ່ **12,000** ເຮັກຕາ ທີ່ເມືອງນາໝໍ້ ແຂວງອຸດົມໄຊ ເພື່ອສ້າງເປັນເມືອງທັນສະໄໝ ຫຼື Smart City.

ໂຄງການພັດທະນາເມືອງທັນສະໄໝ ນີ້ເປັນໜຶ່ງໃນໂຄງການຮີບດ່ວນຂອງ ແຂວງ ອຸດົມໄຊ ໂດຍຈະປະກອບມີ ເຂດອຸດສາຫະກຳ, ເຂດການບໍລິການຂົນສົ່ງ (Logistics) ທີ່ເຊື່ອມຈອດລະຫວ່າງສະຖານີລົດໄຟລາວຈີນ ກັບສະໜາມບິນສາກົນ ແລະ ທາງດ່ວນ, ເຂດການຄ້າ, ທີ່ຢູ່ອາໄສ ແລະ ເຂດອະນຸລັກສີຂຽວ.

ອ່ານເພີ່ມເຕີມທີ່: https://bit.ly/3aNcC99

## ແຂວງເຊກອງ ຈະພັດທະນາແຫຼ່ງຜະລິດໄຟຟ້າຖ່ານຫີນຂະໜາດໃຫຍ່ 2 ແຫ່ງໃນທ້າຍປີ 2021

ໂຮງງານໄຟຟ້າທັງ 2 ແຫ່ງ ຖືວ່າເປັນໂຄງການໃຫຍ່ ຊຶ່ງມີອາຍຸສຳປະທານ 25 ປີ ໂດຍຈະຂຸດຄົ້ນຖ່ານຫີນພາຍໃນແຂວງເຊກອງ ເປັນເຊື້ອເພີງໃນການຜະລິດກະແສໄຟຟ້າ. ສະເພາະໂຮງງານແຫ່ງທີ 1 ແມ່ນມີກຳລັງຕິດຕັ້ງສູງເຖິງ 1,800 ເມກາວັດ ຕັ້ງຢູ່ເມືອງກະລຶມ ໂດຍແມ່ນກຸ່ມບໍລິສັດພອນສັກເປັນຜູ້ລົງທຶນ; ສ່ວນໂຮງງານແຫ່ງທີ 2 ມີກຳລັງຕິດຕັ້ງປະມານ 700 ເມກາວັດ ຕັ້ງຢູ່ເມືອງລະມາມ ໂດຍແມ່ນການລົງທຶນຂອງນັກລົງທຶນຈີນ.
ຕາມແຜນແລ້ວ ໂຮງງານທັງສອງແຫ່ງ ຈະສົ່ງໄຟຟ້າຂາຍໃຫ້ສະເພາະແຕ່ປະເທດກຳປູເຈຍເທົ່ານັ້ນ ເຊິ່ງຄາດວ່າຈະໄດ້ຂາຍພາຍໃນປີ 2025.

ອ່ານເພີ່ມເຕີມທີ່: https://bit.ly/3v6qGCf

## ກິດຈະກຳໃນໄຕມາດໜ້າ (ປະຈຳເດືອນ ເມສາ – ມິຖຸນາ 2021)

- ກອງເລຂາ LIWG ພົບປະ ແລະ ຮຽນຮູ້ວຽກຂອງສະມາຊິກ ຢູ່ແຂວງສະຫວັນນະເຂດ
- ການຝຶກອົບຮົມແກ່ບັນດາສະມາຊິກຂອງ LIWG ກ່ຽວກັບການຂໍສະໜັບສະໜູນດ້ານນະໂຍບາຍ ຕໍ່ ກັບກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້
- ກອງປະຊຸມແລກປ່ຽນບົດຮຽນ ຜົນຈາກການວິເຄາະ ຄຸນນະພາບຂອງການລົງທຶນດ້ານທີ່ດິນ ໃນລາວ
- ກອງປະຊຸມເພື່ອພັດທະນາປະຕິທິນກົດໝາຍສະບັບປີ 2022
- ກອງປະຊຸມຄັ້ງທີ 2 ຂອງຂະແໜງການຍ່ອນທີ່ດິນ
- ການຝຶກອົບຮົມແບບໃກ້ຊິດຂອງໂຄງການ LIFE ແລະ ການພັດທະນາຄູ່ມືໃໝ່ສຳລັບການຝຶກອົບຮົມ



ຂໍຂອບໃຈບັນດາທ່ານທີ່ອ່ານຈົດໝາຍຂ່າວພວກເຮົາ

ຂໍໃຫ້ບັນດາທ່ານ ມີສຸຂະພາບແຂງແຮງ ແລະ ປອດໄພຈາກໄພພະຍາດ!

ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:

ໂທ: +85630 9815657

ອີເມລ: co@laolandinfo.org

ເວັບໄຊ້: www.laolandinfo.org

ເຟສບຸກ: Land Information Working Group

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG